ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ

MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1970 /ທຄຕລ.2025.......

ນະຄອນຫຼວງວຽງຈັນ, ວັນທີ: 01.07.2025....

# ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດກວດສອບໂຄງສ້າງ, ອອກແບບກໍ່ສ້າງ ແລະ ຕົບແຕ່ງ

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາປະເມີນຄວາມແຂງແກ່ນອາຄານຕຶກ C ສຳນັກງານໃຫຍ່.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດອອກແບບກໍ່ສ້າງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາປະເມີນຄວາມ ແຂງແກ່ນອາຄານຕຶກ C ສຳນັກງານໃຫຍ່ ເຊິ່ງສະຖານທີ່ຕອນດິນຕັ້ງຢູ່ ບ້ານຊຽງຍືນ ເມືອງຈັນທະບູລີ ນະຄອນ ຫຼວງວຽງຈັນ ໂດຍມີເນື້ອໃນດັ່ງນີ້:

**I. ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:**

**1. ຊອງທີ 01 (ບໍ່ປິດຊອງ):**

1) ໃບທະບຽນວິສາຫະກິດ;
2) ໃບອະນຸຍາດດຳເນີນທຸລະກິດປີ 2024 ຫຼື 2025;
3) ທຶນຈົດທະບຽນວິສາຫະກິດ 1 ຕື້ກີບຂຶ້ນໄປ;
4) ໃບຢັ້ງຢືນການເສຍອາກອນປີ 2023 ຫຼື 2024;
5) ໃບຢັ້ງຢືນຜົນງານ ແລະ ປະສົບການດ້ານການກວດສອບ ແລະ ຢັ້ງຢືນຄວາມແຂງແກ່ນຂອງອາຄານທີ່ມີລັກສະນະຄ້າຍຄືກັນເປັນອາຄານຢ່າງໜ້ອຍ 5ຊັ້ນ ຢ່າງໜ້ອຍ 3 ໂຄງການ.
    - ເອກະສານຊອງທີ 01 ແມ່ນໃຫ້ສົ່ງກ່ອນວັນທີ 11/07/2025 ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່.

**2. ຊອງທີ 02 (ປິດຊອງ):**

1) ໃບສະເໜີລາຄາ 1 ຊຸດ ເປັນສະກຸນເງິນກີບ ລວມອາກອນມູນຄ່າເພີ່ມ;
2) ໄລຍະເວລາການປະເມີນ;
3) ໜັງສືຄ້ຳປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທີ່ສະເໜີ ດ້ວຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 23/09/2025) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ, ສຳລັບຜູ້ຊະນະການປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາ.
    - ວັນພຸດ, ວັນທີ 23/07/2025, ເວລາ 09:00 ໂມງ ແມ່ນມື້ເປີດຊອງປະມູນຊ່ອງໜ້າຄະນະກຳມະການ ທຄຕລ, ບໍລິສັດຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 05 ຕຶກ C;

- ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດເປັນຜູ້ປະເມີນເອງ ແລະ ບໍ່ໃຫ້ເປັນການ ປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ;

## II. ໜ້າວຽກທີ່ຕ້ອງການ

1) ເອກະສານວິເຄາະໂຄງສ້າງ ແລະ ໜັງສືລາຍງານ ແລະ ຢັ້ງຢືນຄວາມແຂງແກ່ນອາຄານຕຶກ C ສໍານັກງານໃຫຍ່.

## III. ການພົວພັນ ແລະ ໄລຍະເວລາການປະຕິບັດວຽກ

1) ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບລາຍລະອຽດການປະເມີນ ຫຼື ລົງສໍາຫຼວດສະຖານທີ່ຕົວຈິງ ຈາກວັນທີ 01/07/2025-21/07/2025, ໃນຊ່ວງເວລາ 08:30-11:30 ໂມງ ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄໍາຖາມໃດໆ ທັງໝົດ.

## IV. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄໍ້າປະກັນການປະມູນ 10% ຄືນ.
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ຄ່າທໍານຽມຈົດທະບຽນສານ ແລະ ຈົດທະບຽນຊັບສິນຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດອອກແບບທີ່ຊະນະການປະມູນ.
3) ການຊໍາລະຄ່າປະເມີນ 100% ພາຍຫຼັງ ທຄຕລ ໄດ້ຮັບເອກະສານວິເຄາະໂຄງສ້າງ ແລະ ໜັງສືລາຍງານ ແລະ ຢັ້ງຢືນຄວາມແຂງແກ່ນອາຄານຕຶກ C ສໍານັກງານ ໃຫຍ່.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ປະທານຄະນະກໍາມະການ**
**ຈັດຊື້, ກໍ່ສ້າງ-ສ້ອມແປງ-ບໍລິການອື່ນໆ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ສປປ ລາວ ນະຄອນຫລວງວຽງຈັນ

ນ. ສາຍສະໝອນ ຈັນທະຈັກ

ຜູ້ປະສານງານ:

1) ທ່ານ ນາງ ວຽງແກ້ວ ອິນສີມີໄຊ 020 59 594 236
2) ທ່ານ ເພັດສະໝອນ ແສງຕະກຸນ 020 77467722